**ມິຊຊາສົມໂພດພຣະກຣິສໂຕປະຈັກ**

**ວັນທີ 2 ມັງກອນ 2022**



**ພຣະວໍລະສານໂດຍນັກບຸນມັດເທວ 2, 1-12**

ເມື່ອພຣະເຢຊູເຈົ້າຊົງບັງເກີດຢູ່ເມືອງເບັດເລແຮມແຂວງຢູດາໃນສະໄໝພະຍາເຮຣອດເປັນກະສັດນັ້ນ ມີພວກບັດດິດຈາກທິດຕາເວັນອອກມາກຸງເຢຣູຊາແລມຖາມວ່າ: “ກະສັດຂອງພວກຢິວທາກໍເກີດມານັ້ນຢູ່ໃສ? ພວກເຮົາໄດ້ແນມເຫັນດາວຂອງພຣະອົງທາງທິດຕາເວັນອອກ, ແລະໄດ້ມານະມັດສະການພຣະອົງ”. ພະຍາເຮຣອດຊາບຂ່າວນີ້ກໍຕົກໃຈຢ້ານ, ແລະໝົດເມືອງເຢຣູຊາແລມກໍວຸ້ນວາຍໄປຕາມດ້ວຍ, ເຮຣອດຈຶ່ງມີຄໍາສັ່ງໃຫ້ປະຊຸມພວກເຈົ້າຄະນະສົງ ແລະພວກນັກປາດທາງພຣະຄໍາພີແລ້ວສອບຖາມວ່າ: “ພຣະກຣິສໂຕເຈົ້າຈະຕ້ອງບັງເກີດຢູ່ບ່ອນໃດແທ້?” ພວກນັ້ນກໍຕອບວ່າ: “ຈະບັງເກີດຢູ່ເບັດເລແຮມແຂວງຢູດາຕາມທີ່ປະພາສົກໄດ້ກ່າວໄວ້ວ່າ: ເບັດເລແຮມດິນແດນແຫ່ງຢູດາເອີຍ! ເຈົ້າຈະບໍ່ນ້ອຍໜ້າແກ່ຫົວເມືອງອື່ນໆ ແຫ່ງຢູດາດອກ, ຍ້ອນວ່າຜູ້ນໍາອິສຣາແອນລາດສະດອນຂອງເຮົາຈະອອກມາຈາກເຈົ້າ”.

ພະຍາເຮຣອດຈຶ່ງຮຽກພວກບັນດິດ ເຂົ້າມາເຝົ້າຢ່າງລັບ, ແລ້ວສືບຖາມຢ່າງຖີ່ຖ້ວນເຖິງວັນເວລາທີ່ດາວດວງນັ້ນໄດ້ປາກົດອອກມາ. ແລ້ວກໍສົ່ງພວກບັດດິດໄປເບັດເລແຮມພ້ອມທັງສັ່ງວ່າ: “ພວກທ່ານຈົ່ງໄປສືບຖາມເລື້ອງພຣະກຸມານໃຫ້ແຈ່ມແຈ້ງ, ແລະເມື່ອພົບເຫັນແລ້ວໃຫ້ພວກທ່ານຫລົບມາບອກຂ້າພະເຈົ້າ ເພື່ອຂ້າພະເຈົ້າຈະໄດ້ໄປນະມັດສະການດ້ວຍ”

ເມື່ອຮັບບັນຊາແລ້ວ, ພວກບັນດິດກໍອອກເດີນທາງ. ດາວທີ່ເຄີຍເຫັນຢູ່ທາງທິດຕາເວັນອອກນັ້ນກໍປາກົດອອກມານໍາທາງໃຫ້ອີກ, ແລະໄດ້ໄປຢຸດຢູ່ບ່ອນພຣະກຸມານປະທັບຢູ່. ພວກບັນດິດເຫັນດາວນັ້ນກໍພາກັນຊື່ນຍິນດີເປັນຢ່າງຍິ່ງ. ເມື່ອເຂົ້າໃນເຮືອນ, ພວກເພິ່ນກໍພົບເຫັນພຣະກຸມານແລະພຣະມານດາມາຣີອາ, ແລ້ວກໍພາກັນຂາບລົງນົບໄຫວ້ພຣະກຸມານ. ຕໍ່ໄປໄດ້ໄຂຫີບນໍາເອົາເຄື່ອງບັນນາການມີທອງຄໍາ, ກໍານະຍານແລະເຄື່ອງຫອມຂຶ້ນຖະຫວາຍພຣະອົງ. ພວກບັນດິດໄດ້ຮັບຊາບທາງຄວາມຝັນວ່າບໍ່ໃຫ້ຫລົບຄືນໄປຫາພະຍາເຮຣອດ,ຈຶ່ງໄດ້ພາກັນຫລົບເມືອປະເທດຂອງຕົນໂດຍທາງອື່ນ.

ນີ້ແມ່ນວາຈາຂອງພຣະກຣິສໂຕເຈົ້າ

**ບົດແບ່ງປັນ: ມທ 2, 1-12**

ກ່ອນການບັງເກີດມາຂອງພຣະເຢຊູເຈົ້າຈົນເຖິງວັນນີ້, ວັນຊຶ່ງພວກເຮົາສະຫລອງພຣະກຣິສໂຕປະຈັກ ຊຶ່ງເປັນອາທິດທີສອງຫລັງຈາກບຸນໂນແອນ. ບັນດາປະພາສົກໄດ້ປະກາດລ່ວງໜ້າເຖິງການບັງເກີດມາຂອງພຣະເຢຊູເຈົ້າໂດຍໃຊ້ຮູບພາບຂອງແສງສະວ່າງ, ຂອງດວງອາທິດຍາມເຊົ້າທີ່ຮຸ່ງແຈ້ງເພື່ອນຳພາປະຊາກອນຂອງພຣະອົງ ຄືຊົນຊາດອິສຣາແອນທີ່ເດີນຢູ່ໃນຄວາມມືດແລະຮົ່ມເງົາແຫ່ງຄວາມຕາຍ. ແສງສະວ່າງຂອງດວງອາທິດຍາມເຊົ້າທີ່ຮຸ່ງແຈ້ງນີ້ແມ່ນພຣະເຢຊູກຣິສໂຕ, ພຣະຜູ້ກູ້ໄຖ່ຂອງພວກເຮົານັ້ນເອງ.

ໃນຄ່ຳຄືນໂນແອນ,ແສງສະວ່າງຂອງພຣະເຈົ້າໄດ້ນຳພາບັນດາຜູ້ລ້ຽງແກະໃຫ້ມານົບໄຫວ້ນຳມັດສະການພຣະອົງ. ບັນດາຜູ້ລ້ຽງແກະນີ້ແມ່ນຄົນທຸກຈົນ, ຄົນຕ່ຳນ້ອຍ. ເພາະແມ່ນຄົນຕ່ຳນ້ອຍທຸກຈົນນີ້ແລຊຶ່ງພຣະເຈົ້າໄດ້ໄຂສຳແດງໃຫ້ເຫັນພຣະບຸດຂອງພຣະອົງກ່ອນໝູ່ໝົດ.

ວັນນີ້, ແສງສະວ່າງນັ້ນກໍໄດ້ນຳພາພວກບັນດິດທີ່ມາຈາກທິດຕາເວັນອອກ. ພວກບັນດິດນີ້ເປັນຄົນຕ່າງສາດສະໜາ. ແຕ່ພວກເຂົາໄດ້ນຳແສງສະວ່າງເພື່ອມານົບໄຫວ້ນຳມັດສະການພຣະເຢຊູກຸມານ, ທີ່ນອນແພນອນຢູ່ໃນຮາງຫຍ້າ. ໝາຍວ່າກຸ່ມຄົນທີສອງທີ່ໄດ້ເຫັນພຣະເຢຊູ, ພຣະບຸດຂອງພຣະເຈົ້ານັ້ນແມ່ນຄົນຕ່າງສາດສະໜາ.

ສິ່ງທີ່ກ່າວມາຂ້າງເທິງນີ້ຊ່ວຍພວກເຮົາໃຫ້ເຂົ້າໃຈວ່າການທີ່ພຣະເຢຊູເຈົ້າລົງມາບັງເກີດເປັນມະນຸດນັ້ນແມ່ນເພື່ອຄົນທຸກຈົນແລະເພື່ອໝົດທຸກຄົນ: ບໍ່ວ່າຈະເປັນຄົນເຊື່ອໃນພຣະອົງກໍຄືຄົນຕ່າງສາດສະໜາ. ເພາະຄວາມຮັກແລະການໄຖ່ກູ້ຂອງພຣະເຢຊູເຈົ້ານັ້ນແມ່ນສຳລັບໝົດທຸກຄົນ. ນີ້ແລຈຶ່ງແມ່ນຂ່າວດີສຳລັບມະນຸດທັງມວນ. ແມ່ນຄວາມຍິນດີສຳລັບຜູ້ທີ່ຢູ່ໃນຄວາມກົວຢ້ານແລະຄວາມສິ້ນຫວັງ. ເພາະພຣະເຢຊູ, ພຣະຜູ້ກູ້ໄຖ່ຂອງພວກເຮົາ, ພຣະອົງມາເພື່ອຊ່ວຍພວກເຮົາ ບໍ່ແມ່ນເພື່ອຕັດສິນພວກເຮົາ. ພຣະອົງມາເພື່ອຢູ່ນຳພວກເຮົາ ບໍ່ວ່າຈະແມ່ນຍາມສຸກສະບາຍກໍຄືຍາມຫຍຸ້ງຍາກ, ບໍ່ວ່າຈະແມ່ນຍາມສຸຂະພາບແຂງແຮງ, ກໍຄືຍາມເຈັບໄຂ້ໄດ້ປ່ວຍ, ພຣະອົງຢູ່ຄຽງຂ້າງພວກເຮົາສະເໝີ. ເພາະພຣະອົງແມ່ນອົງແຫ່ງແອມມານູແອນ, ອັນມີຄວາມໝາຍວ່າ: "ພຣະເຈົ້າຢູ່ນຳພວກເຮົາ".

ຖ້າພວກເຮົາຢູ່ໃນພຣະເຈົ້າແລະພຣະເຈົ້າຢູ່ໃນພວກເຮົາ, ພວກເຮົາກໍຈະຢູ່ໃນສັນຕິສຸກ, ໃນຄວາມຮັກແລະການໃຫ້ອະໄພຂອງພຣະອົງ. ແລະສັນຕິສຸກ, ຄວາມຮັກແລະການໃຫ້ອະໄພນີ້ແມ່ນຮູບພາບບົ່ງບອກລ່ວງໜ້າເຖິງອານາຈັກສະຫວັນ. ເພາະອານາຈັກສະຫວັນຊຶ່ງມະນຸດທຸກຄົນປາດຖະໜາຢາກໄປຢູ່ນັ້ນ, ເປັນບ່ອນທີ່ພຣະເຈົ້າຢູ່ນຳມະນຸດແລະມະນຸດຢູ່ນຳພຣະເຈົ້າ. ເປັນບ່ອນທີ່ມີແຕ່ຄວາມຮັກ, ສັນຕິສຸກແລະການໃຫ້ອະໄພ.

ດ້ວຍເຫດນີ້, ການບັງເກີດມາຂອງພຣະເຢຊູເຈົ້າໃນວັນບຸນໂນແອນຈຶ່ງເປັນການນຳມະນຸດໄປສູ່ໂລກໃໝ່, ໄປສູ່ອານາຈັກສະຫວັນຂອງພຣະອົງ. ແລະອານາຈັກສະຫວັນນີ້ບໍ່ໄດ້ຢູ່ອື່ນໄກ, ແຕ່ຢູ່ໃນໂລກນີ້, ໃນຊີວິດຂອງພວກເຮົາວັນນີ້ແລະໃນສະຖານທີ່ນີ້. ເພາະຢູ່ບ່ອນໃດມີຄວາມຮັກ, ຢູ່ບ່ອນນັ້ນກໍມີພຣະເຈົ້າ. ແລະຢູ່ບ່ອນໃດມີພຣະເຈົ້າ, ຢູ່ບ່ອນນັ້ນກໍແມ່ນອານາຈັກຂອງພຣະອົງ.

**ພາວະນາ**

ຂໍໃຫ້ຄວາມຮັກ, ສັນຕິສຸກແລະການໃຫ້ອະໄພຂອງພຣະເຢຊູກຸມານຈົ່ງສະຖິດຢູ່ນຳພວກເຮົາແຕ່ລະຄົນແລະໃນຄອບຄົວພວກເຮົາແຕ່ລະຄົນໃນວັນຕົ້ນປີໃໝ່ສາກົນນີ້ດ້ວຍເທີ້ນ. ອາແມນ

ຄຸນພໍ່ ອັງຕວນ ກຽດຕິສັກ